**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ,

ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ :...107.../ປທສ.

ນະຄອນຫລວງວຽງຈັນ, ວັນທີ 25 JAN 2016

# ຂໍ້ຕົກລົງ
# ວ່າດ້ວຍ ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ), ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011.

## ລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ, ກວດກາວຽກງານການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ສະດວກ, ປອດໄພ, ມີປະສິດທິພາບ ແລະ ມີປະສິດທິຜົນສູງ ແນໃສ່ ເຮັດໃຫ້ ການເຊື່ອມຕໍ່ເຄືອຂ່າຍລະຫວ່າງຜູ້ໃຫ້ບໍລິການມີຄວາມສະເໝີພາບ, ເປັນລະບົບລວມສູນການສື່ສານ ທີ່ ສູນ ອິນເຕີເນັດ ແຫ່ງຊາດ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2. ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ແມ່ນ ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ລະຫວ່າງ ສອງ ຫຼື ຫຼາຍ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອເຮັດໃຫ້ຜູ້ຊົມໃຊ້ບໍລິການໂທລະຄົມໃນ ເຄືອຂ່າຍທີ່ຕ່າງກັນສາມາດຕິດຕໍ່ສື່ສານກັນໄດ້ສະດວກ.

**ມາດຕາ 3. ການອະທິບາຍຄຳສັບ.**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຫ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ບໍລິສັດທີ່ໄດ້ຮັບອະນຸຍາດ ດຳເນີນທຸລະກິດບໍລິການໂທລະຄົມມະນາຄົມລວມທັງຜູ້ໃຫ້ບໍລິການອິນເຕີເນັດ, ສູນຂໍ້ມູນຂ່າວສານ, ໂທລະສັບ, ຂໍ້ຄວາມສັ້ນ ແລະ ການບໍລິການໂທລະຄົມມະນາຄົມ ອື່ນໆ;
2. **ລະບົບລວມສູນການສື່ສານ** ໝາຍເຖິງ ການເຊື່ອມຕໍ່ລະຫວ່າງເຄືອຂ່າຍໂທລະຄົມມະນາຄົມ ພາຍໃນ ແລະ ຕ່າງປະເທດ ເຂົ້າລະບົບລວມສູນການສື່ສານ ທີ່ ສູນອິນເຕີເນັດ ແຫ່ງຊາດ;
3. **ອັດຕາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ** ໝາຍເຖິງ ອັດຕາຄ່າບໍລິການການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ລະຫວ່າງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໂດຍການກຳນົດ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
4. **ອັດຕາຄ່າທາງຜ່ານ** ໝາຍເຖິງ ອັດຕາຄ່າບໍລິການເຊື່ອມຕໍ່ ຜ່ານສູນອິນເຕີເນັດ ແຫ່ງຊາດເພື່ອເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ລະຫວ່າງ ສອງ ຫຼື ຫຼາຍ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໂດຍການກຳນົດ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
5. **ສູນອິນເຕີເນັດແຫ່ງຊາດ ຫຼື ສອຊ** ແມ່ນ ອົງການຈັດຕັ້ງລັດໜຶ່ງ ທີ່ທຽບເທົ່າກົມ ແລະ ຂຶ້ນກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ສູນອິນເຕີເນັດແຫ່ງຊາດໃນ ສ ປປ ລາວ.

## ໝວດທີ 2
## ລະບຽບກ່ຽວກັບການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ

**ມາດຕາ 5. ຫຼັກການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນລະບົບລວມສູນການສື່ສານ;
2. ຮັບປະກັນການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມໃຫ້ມີຄຸນນະພາບ;
3. ຮັບປະກັນທາງດ້ານເຕັກນິກ ການເຊື່ອມຕໍ່ທຸກເຄືອຂ່າຍໂທລະຄົມມະນາຄົມ;
4. ຮັບປະກັນຄວາມສະເໝີພາບທາງດ້ານລາຄາ, ປະລິມານ ແລະ ບໍ່ຈຳແນກປະຕິບັດ;
5. ສຳລັບຜູ້ໃຫ້ບໍລິການອິນເຕີເນັດແມ່ນໃຫ້ເບິ່ງລາຍລະອຽດການເຊື່ອມຕໍ່ອິນເຕີເນັດເພີ່ມຕື່ມ ໃນຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດດຳເນີນທຸລະກິດບໍລິການອິນເຕີເນັດ.

**ມາດຕາ 6. ການກຳນົດອັດຕາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ກຳນົດອັດຕາຄ່າເຊື່ອມຕໍ່ ລະຫວ່າງເຄືອຂ່າຍໂທລະຄົມມະນາຄົມ ພາຍໃນປະເທດ ແລະ ຕ່າງປະເທດ ເປັນແຕ່ລະໄລຍະ.

ອັດຕາຄ່າເຊື່ອມຕໍ່ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ອັດຕາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ແລະ ອັດຕາຄ່າຜ່ານສູນອິນເຕີເນັດ ແຫ່ງຊາດ ແມ່ນຍົກເວັ້ນ ໃນກໍລະນີພິເສດ ເຊັ່ນ: ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ວຽກງານສຸກເສີນ, ວຽກງານສະກັດກັ້ນ ແລະ ບັນເທົາຜົນເສຍຫາຍຈາກໄພພິບັດ ແລະ ວຽກງານອັນສຳຄັນໃຫຍ່ລະດັບຊາດ ໂດຍຕ້ອງໄດ້ຮັບອະນຸຍາດ ແລະ ເຫັນດີ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 3
## ການຂໍອະນຸຍາດເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ

**ມາດຕາ 7. ການຂໍອະນຸຍາດເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ມີຈຸດປະສົງ ຕ້ອງການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ກັບເຄືອຂ່າຍໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການອື່ນ ຕ້ອງໄດ້ຮັບອະນຸຍາດ ແລະ ເຫັນດີຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍສະເໜີ ຕາມແບບຟອມທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວາງອອກ.

**ມາດຕາ 8. ເງື່ອນໄຂການຂໍອະນຸຍາດເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ເງື່ອນໄຂພື້ນຖານໃນການອະນຸຍາດເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີດັ່ງນີ້:

1. ເປັນຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ;
2. ມີລະບົບມາດຕະຖານເຕັກນິກທີ່ສາມາດເຊື່ອມຕໍ່ ກັບ ສູນອິນເຕີເນັດ ແຫ່ງຊາດ;
3. ດຳເນີນການບໍລິການ ໂດຍບໍ່ຂັດກັບ ກົດໝາຍ ແລະ ລະບຽບການ ທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ວາງອອກ;
4. ເງື່ອນໄຂອື່ນ.

**ມາດຕາ 9. ການພິຈາລະນາການຂໍອະນຸຍາດ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາ ການອະນຸຍາດໃຫ້ຜູ້ຮ້ອງຂໍການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ພາຍໃນກຳນົດເວລາ ເຈັດວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຄຳຮ້ອງຂໍ ຖືກຕ້ອງ, ຄົບຖ້ວນ ແລະ ມີເງື່ອນໄຂຕາມທີ່ໄດ້ກຳນົດ ເປັນຕົ້ນໄປ.

ໃນກໍລະນີ ຫາກເຫັນວ່າ ເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ແລະ ບໍ່ມີເງື່ອນໄຂ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບພາຍໃນກຳນົດເວລາຫ້າວັນລັດຖະການ.

## ໝວດ 4
## ສິດ ແລະ ພັນທະ ຂອງຜູ້ຂໍ ແລະ ຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ

**ມາດຕາ 10. ສິດຂອງຜູ້ໃຫ້ເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ສະເໜີອັດຕາຄ່າເຊື່ອມຕໍ່ ໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມ ໃນແຕ່ລະໄລຍະ ຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາ;
2. ເຮັດສັນຍາກັບຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
3. ເກັບອັດຕາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມນຳຜູ້ຂໍເຊື່ອມຕໍ່ເຄືອຂ່າຍ;
4. ສະເໜີຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອໂຈະການເຊື່ອມຕໍ່ ຊົ່ວຄາວ ຫຼື ຖາວອນ ຂອງ ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມ ໃນກໍລະນີ ທີ່ບໍ່ປະຕິບັດຕາມ ສັນຍາ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ;
5. ປິດທັນທີ ໃນກໍລະນີການເຊື່ອມຕໍ່ເຄືອຂ່າຍໂທລະຄົມມີຜົນກະທົບ ຕໍ່ຄວາມໝັ້ນຄົງຂອງຊາດ;
6. ກຳນົດ, ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກ ແລະ ຄຸນນະພາບການເຊື່ອມຕໍ່ ຂອງ ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ທັງພາຍໃນ ແລະ ຕ່າງປະເທດ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໃນລະບຽບກົດໝາຍ.

**ມາດຕາ 11. ພັນທະຂອງຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ.**

ຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ສະໜອງການບໍລິການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນສັນຍາ;
2. ສະໜອງຂໍ້ມູນກ່ຽວກັບການເຊື່ອມຕໍ່ໃຫ້ແກ່ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
3. ຮັບປະກັນທາງດ້ານເຕັກນິກການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ໃຫ້ໄດ້ປະລິມານ ແລະ ຄຸນ ນະພາບ ຕາມມາດຕະຖານສາກົນ;
4. ປະຕິບັດສັນຍາ ການເຊື່ອມຕໍ່ ຢ່າງເຂັ້ມງວດ ແລະ ຮັບປະກັນການເຊື່ອມຕໍ່ໃຫ້ແກ່ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນພິເສດ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 12. ສິດຂອງຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ຂໍເຊື່ອມຕໍ່ນຳຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
2. ສະເໜີຂໍຂໍ້ມູນກ່ຽວກັບການເຊື່ອມຕໍ່;

3. ສະເໜີຕໍ່ຜູ້ໃຫ້ເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງສັນຍາ ແລະ ລະບຽບການທີ່ເຫັນວ່າບໍ່ສອດຄ່ອງ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 13. ພັນທະຂອງຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ.**

ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີພັນທະ ດັ່ງນີ້

1. ປະຕິບັດຕາມອະນຸຍາດການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຢ່າງເຂັ້ມງວດ;
2. ປະຕິບັດດ້ານມາດຕະຖານເຕັກນິກ ໃນການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຢ່າງຖືກຕ້ອງ ຄົບຖ້ວນຕາມມາດຕະຖານສາກົນ;
3. ຊຳລະອັດຕາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
4. ສະໜອງແຜນການ ແລະ ຄວາມຕ້ອງການ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
5. ແຈ້ງແຜນຜັງເຕັກນິກຂອງຕົນລະອຽດ ແລະ ຄັດຕິດມາພ້ອມຄຳຮ້ອງຂໍເຊື່ອມຕໍ່;
6. ຮັບປະກັນ ຫຼັກການ ລະບົບລວມສູນການສື່ສານ ໂດຍ ຜ່ານສູນອິນເຕີເນັດແຫ່ງຊາດ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ການແກ້ໄຂເຫດສຸດວິໄສ

**ມາດຕາ 14. ການແກ້ໄຂເຫດສຸດວິໄສ**

ໃນກໍລະນີເກີດເຫດສຸດວິໄສ ເປັນຕົ້ນ ໄພພິບັດທຳມະຊາດ ຫຼື ການຕິດຂັດທາງດ້ານເຕັກນິກ ຈົນບໍ່ສາມາດໃຫ້ການເຊື່ອມຕໍ່ໄດ້ ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ສາມາດນຳໃຊ້ເສັ້ນທາງການເຊື່ອມຕໍ່ເຄືອຂ່າຍຂອງຕົນທັນທີ ພ້ອມທັງຮັບປະກັນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

**ມາດຕາ 15. ການປະຕິບັດພາຍຫຼັງເກີດເຫດສຸດວິໄສ**

ພາຍຫຼັງ ທີ່ຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ນຳໃຊ້ເສັ້ນທາງການເຊື່ອມຕໍ່ຂອງຕົນໃນກໍລະນີທີ່ເກີດເຫດສຸດວິໄສ ຕ້ອງໄດ້ລາຍງານເປັນລາຍລັກອັກສອນ ຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຊາບພາຍໃນໄລຍະເວລາ ຊາວສີ່ຊົ່ວໂມງ.

## ໝວດທີ 6
## ສັນຍາການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ

**ມາດຕາ 16. ສັນຍາການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ລະຫວ່າງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ກັບ ສູນອິນເຕີເນັດ ແຫ່ງຊາດ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງເຮັດສັນຍາການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ກັບ ສູນອິນເຕີເນັດ ແຫ່ງຊາດ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ໂດຍບໍ່ຂັດກັບລະບຽບກົດໝາຍທີ່ກ່ຽວຂ້ອງ;

**ມາດຕາ 17. ສັນຍາການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ລະຫວ່າງ ຜູ້ໃຫ້ບໍລິການໂທລະຄົມມະນາຄົມນຳກັນ.**

ການເຮັດສັນຍາການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ປະຕິບັດ ດັ່ງນີ້:

1. ສັນຍາການເຊື່ອມຕໍ່ເຄືອຂ່າຍ ລະຫວ່າງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງໃຫ້ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເຂົ້າຮ່ວມນຳ ເພື່ອເປັນພະຍານ ແລະ ສັນຍາການເຊື່ອມຕໍ່ ຈະມີຜົນບັງຄັບໃຊ້ພາຍໃນ ສາມສິບວັນ ຫຼັງຈາກທຸກໆພາກສ່ວນໄດ້ລົງລາຍເຊັນເປັນຕົ້ນໄປ;
2. ຜູ້ໃຫ້ບໍລິການໂທລະຄົມມະນາຄົມໃດ ທີ່ມີຈຸດປະສົງຂໍເຊື່ອມຕໍ່ເຄືອຂ່າຍ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ ທີ່ຈຳເປັນສຳລັບການດຳເນີນງານ.
3. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງແຈ້ງຜູ້ປະສານງານ, ແຈ້ງຂໍ້ມູນທີ່ກ່ຽວຂ້ອງ
4. ໃຫ້ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຊາບເປັນແຕ່ລະໄລຍະ ແລະ ໃນເວລາ ທີ່ມີການປ່ຽນແປງ ພາຍໃນ 5 ວັນລັດຖະການ

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 18. ຂໍ້ຫ້າມສຳລັບຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ຫ້າມຜູ້ໃຫ້ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນຄວາມລັບໃຫ້ບຸກຄົນ ຫຼື ພາກສ່ວນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມ (ນອກຈາກວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ມີການອະນຸມັດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ);
2. ຂຶ້ນ ຫຼື ຫຼຸດ ອັດຕາຄ່າເຊື່ອມຕໍ່ ໂດຍບໍ່ໄດ້ຮັບອະນຸຍາດ;
3. ປ່ຽນແປງຂໍ້ມູນການບໍລິການຕົ້ນທາງ.

**ມາດຕາ 19. ຂໍ້ຫ້າມສຳລັບຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ຫ້າມຜູ້ຂໍເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ເຮັດການເຊື່ອມຕໍ່ ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ຜ່ານລະບົບລວມສູນການສື່ສານ;
2. ເຮັດສັນຍາການເຊື່ອມຕໍ່ເຄືອຂ່າຍຮ່ວມກັນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ບໍ່ໃຫ້ການຮ່ວມມື ນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ຖ່ວງດຶງເວລາໃນການເຊື່ອມຕໍ່ ໂດຍບໍ່ມີເຫດຜົນ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20. ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍຕາມລະບຽບການ.

**ມາດຕາ 21. ມາດຕະການຕໍ່ຜູ້ລະເມີດ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ລະເມີດຕໍ່ ຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 22. ການຈັດຕັ້ງປະຕິບັດ**

ມອບໃຫ້ ຄະນະກຳມະການດັດສົມໂທລະຄົມມະນາຄົມ ຮັບຜິດຊອບປະສານສົມທົບພາກສ່ວນອື່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້.

**ມາດຕາ 23. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ໄດ້ລົງລາຍເຊັນ ແລະ ພາຍຫຼັງ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີວ່າການ**

ທຽມ ພົມມະຈັນ